# Yahoo!
# ເວັບທ່າທີ່ໃຫຍ່ທີ່ສຸດແຫ່ງໜຶ່ງ

## 1. ຂໍ້ມູນເບື້ອງຕົ້ນ

Yahoo! Inc. (www. yahoo. com) ເປັນບໍລິສັດອອນໄລນ໌ໃຫ້ບໍລິການເວັບທ່າ (Portal site) ທີ່ໃຫຍ່ທີ່ສຸດແຫ່ງໜຶ່ງຂອງໂລກ ບໍລິສັດກໍ່ຕັ້ງຢ່າງເປັນທາງການຂຶ້ນເມື່ອປີ 1995 ໂດຍນາຍ David Filo ແລະ Jerry Yang ນັກສຶກສາປີນຍາເອກຂອງມະຫາວິທະຍາໄລສະແຕນຟອລ໌ດ ຊຶ່ງລິເລີ່ມພັດທະນາຊອຟແວລ໌ທີ່ໃຊ້ໃນການສືບຄົ້ນເວັບໄຊຕ໌ເມື່ອປີ 1994

ໃນປະຈຸບັນ Yahoo! ເປັນເວັບໄຊຕ໌ທີ່ຜູ້ໃຊ້ນິຍົມໃຊ້ບໍລິການສືບຄົ້ນຂໍ້ມູນຕ່າງ ໆແລະໃຊ້ບໍລິການໄປລົດນີຍ໌ອີເລັກໂທນິກສ໌ (E-mail) ເຮັດໃຫ້ບໍລິສັດຕ່າງ ໆນິຍົມມາໃຊ້ບໍລິການໂຄສະນາອອນໄລນ໌ຜ່ານໜ້າເວັບໄຊຕ໌ Yahoo! ຊຶ່ງເຮັດລາຍໄດ້ຈຳນວນຫລາຍໃຫ້ແກ່ບໍລິສັດ ໃນປີ 2000 ບໍລິສັດມີພະນັກງານປະຈຳ (Full-Time Employees) 3, 259 ຄົນ ແລະມີລາຍໄດ້ລວມກວ່າ 1, 110 ລ້ານດອນລາລ໌ ຊຶ່ງຄິດເປັນອັດຕາສ່ວນລາຍໄດ້ຕໍ່ພະນັກງານສູງກວ່າບັນດາບໍລິສັດສື່ (Media Firms) ເກືອບທັງໝົດ ເຊັ່ນ ບໍລິສັດ Knight Ridder ຊຶ່ງເປັນບໍລິສັດໜັງສືພິມ ມີພະນັກງານປະມານ 6 ເທົ່າຂອງ Yahoo ແຕ່ມີລາຍໄດ້ນ້ອຍກວ່າ 3 ເທົ່າ

## 2. ຂັ້ນຕອນໃນການປະກອບທຸລະກິດ

ເຮົາສາມາດຈຳແນກບໍລິການຂອງເວັບໄຊຕ໌ Yahoo! ໃນປະຈຸບັນອອກເປັນບໍລິການຫລັກ ໆ 4 ກຸ່ມ ຄື ບໍລິການສືບຄົ້ນຂໍ້ມູນ (Search) ບໍລິການເນື້ອຫາ (Content) ບໍລິການຕິດຕໍ່ສື່ສານ (Communication) ແລະບໍລິການພານິຊະຍະກຳ (Commerce)

1. ບໍລິການສືບຄົ້ນເວັບໄຊຕ໌ ຊຶ່ງເປັນບໍລິການທີ່ຊ່ວຍໃຫ້ຜູ້ໃຊ້ສາມາດຄົ້ນຫາຂໍ້ມູນຕ່າງ ໆໂດຍໃຊ້ເຄື່ອງມືສືບຄົ້ນ (Search Engine) ໃນລັກສະນະຕ່າງ ໆໄດ້ ດັ່ງຕໍ່ໄປນີ້

    - Search ເປັນເຄື່ອງມືສືບຄົ້ນເວັບໄຊຕ໌ຢ່າງງ່າຍ ຫລືໃຊ້ໄດເລັກທໍລີ (Directory) ຄົ້ນຫາຂໍ້ມູນທີ່ໄດ້ຈັດແຍກອອກເປັນໝວດໝູ່ຕ່າງ ໆລ່ວງໜ້າ

    - Advanced Search ເປັນເຄື່ອງມືສືບຄົ້ນເວັບໄຊຕ໌ແບບຊັບຊ້ອນ ດ້ວຍວິທີການສ້າງເງື່ອນໄຂຂອງການຄົ້ນຫາຂຶ້ນ ຊຶ່ງ-ຈະໄດ້ຜົນລັບທ໌ ກົງຕາມຄວາມຕ້ອງການຫລາຍຂຶ້ນ ເຊັ່ນ ການໃຊ້ເງື່ອນໄຂ And ແລະ Or ເປັນຕົ້ນ

2. ບໍລິການເນື້ອຫາ ຊຶ່ງເປັນບໍລິການຂໍ້ມູນໃຫ້ແກ່ຜູ້ໃຊ້ ເຊັ່ນ ຂ່າວການເມືອງ ຂ່າວກິລາ ລາຍງານພະຍາກອນອາກາດ ດົນຕີ ແລະຂ່າວ-ການເງິນ ເປັນຕົ້ນ

3. ບໍລິການຕິດຕໍ່ສື່ສານ ຊຶ່ງເປັນບໍລິການສູນກາງການຕິດຕໍ່ສື່ສານ (Communication Hub) ທີ່ສຳຄັນເທິງອິນເຕີລ໌ເນັດໃຫ້ແກ່ຜູ້ໃຊ້ ເຊັ່ນ ຫ້ອງສົນທະນາ (Board) ໄປລົດນີຍ໌ອີເລັກໂທນິກສ໌ (Mail) ການສົ່ງຂໍ້ຄວາມ (Messenger) ບັດອວຍ-ພອນ (Greetings Services) ເປັນຕົ້ນ

4. ບໍລິການພານິຊະຍະກຳ ຊຶ່ງເປັນບໍລິການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຕ່າງ ໆຂອງ Yahoo! ແລະຜູ້ປະກອບການອື່ນ ໆ ເຊັ່ນ ຕະຫລາດປະມູນ (Auction) ຕະຫລາດກາງສຳລັບພານິຊະຍະກຳ (Marketplace for Commerce) ຊຶ່ງມີບໍລິການ-ຂາຍສິນຄ້າແລະ ບໍລິການ (Goods and services) ຈາກບໍລິສັດຊັ້ນນຳຕ່າງ ໆ ເຊັ່ນ Ford Barnes&Boble AT&T Wireless FTD&1-800-Flowers. com ແລະ E-Loan ເປັນຕົ້ນ

Yahoo! ໃຫ້ຜູ້ໃຊ້ໃຊ້ບໍລິການໂດຍບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດ ໆທັງສິ້ນ ຊຶ່ງບໍລິການທັງໝົດຈະຖືກແຍກແຍະອອກເປັນກຸ່ມໄດເລັກທໍລີ່ຕ່າງ ໆ-ໃຫ້ເລືອກ ໃຊ້ຕາມທີ່ຕ້ອງການ ນອກຈາກນີ້ Yahoo! ໄດ້ໃຫ້ບໍລິການສ້າງຄວາມເປັນສ່ວນຕົວຂອງຜູ້ໃຊ້ແຕ່ລະລາຍຫລາຍຂື້ນ ເຊັ່ນ ການສ້າງ-ບັນຊີສ່ວນຕົວໃນການຊື້ ສິນຄ້າການສ້າງບັນຊີເພື່ອຮັບຂໍ້ມູນຂ່າວສານ ແລະການສ້າງໄປລົດນິຍ໌ອີເລັກໂທນິກສ໌ສ່ວນຕົວ ເປັນຕົ້ນ

## 3. ເທັກໂນໂລຍີ

ລາຍໄດ້ຫລັກຂອງ Yahoo! ມາຈາກການໃຫ້ບໍລິການຫລັກ ໆ ດັ່ງຕໍ່ໄປນີ້ (ສະແດງລາຍລະອຽດໃນຕາລາງທີ່ 1)

1. ລາຍໄດ້ຈາກຄ່າໂຄສະນາ (Advertising Revenue) ເຊັ່ນ ຄ່າທຳນຽມຕິດຕັ້ງ (Replacement Fee) ການຕິດທາໂຄສະ-ນາອອນໄລນ໌ (Banner Advertisement) ການໃຫ້ບໍລິການເຮັດການຕະຫລາດໂດຍກົງ (Direct Marketing) ແລະຄ່າ-ທຳນຽມການເຮັດທຸລະກຳ (Transaction Fee) ເປັນຕົ້ນ

2. ລາຍໄດ້ຈາກການໃຫ້ບໍລິການທາງທຸລະກິດ (Business Service Revenue) ເຊັ່ນ ບໍລິການໂຮດຕິ້ງແບບທີ່ຕ້ອງສະໝັກ-ສະມາຊິກ (Subscription-Based Hosting Service) ແລະການກະຈາຍສຽງແລະແຜ່ພາບອອນໄລນ໌ (Broadcasting Audio and Video) ເປັນຕົ້ນ

**ຕາລາງທີ່ 1 ລາຍໄດ້ລວມຂອງ Yahoo! ຈຳແນກຕາມທີ່ມາຂອງລາຍໄດ້**

| | ປີ 2000 | ປີ 1999 | ປີ 1998 |
|---|---|---|---|
| ລາຍໄດ້ຈາກຄ່າໂຄສະນາ | 1,004 | 535 | 226 |
| ລາຍໄດ້ຈາກການໃຫ້ບໍລິການທາງທຸລະກິດ | 106 | 57 | 19 |
| ລາຍໄດ້ລວມ | 1,110 | 592 | 245 |

ທີ່ມາ: ຄະນະກຳມະການກຳກັບເບິ່ງແລດລາດຫລັກຊັບປະເທດສະຫລັດ ຯ (Security Exchange Commission)

ໃນປີ 2000 ເວັບໄຊຕ໌ຂອງ Yahoo! ມີຜູ້ຢ້ຽມຊົມແລະໃຊ້ບໍລິການຕ່າງ ໆກວ່າ 180 ລ້ານຄົນ (Unique Users) ຊຶ່ງຄິດເປັນການໃຊ້-ບໍລິການໂດຍສະເລ່ຍ ປະມານ 900 ລ້ານເວັບເພຈຕໍ່ມື້ ໃນລະຫວ່າງໄຕມາດທີ່ 4 ຂອງປີດຽວກັນ Yahoo! ມີລູກຄ້າທີ່ລົງໂຄດນາອອນໄລນ໌-ປະມານ 3, 700 ລາຍ ໂດຍໃນ ຈຳນວນນີ້ມີບໍລິສັດຄົນຍັກໃຫຍ່ທີ່ຕິດອັນດັບ Fortune 100 ເຖິງ 55 ແຫ່ງ

**ຕາລາງທີ່ 2 ຜົນການປະກອບການຂອງ Yahoo! ລະຫວ່າງປີ 1998-2000**

ຫນ່ວຍ: ລ້ານດອນລາລ໌ສະຫະລັດ ຯ

| . | ປີ 2000 | ປີ 1999 | ປີ 1998 |
|---|---|---|---|
| **ລາຍໄດ້ລວມ** | **1,110** | **592** | **245** |
| **ລວມຄ່າໃຊ້ຈ່າຍໂດຍຕົງ** | **158** | **103** | **52** |
| **ກຳໄລຂັ້ນຕົ້ນ** | **952**</font> | **489** | **193** |
| ຄ່າໃຊ້ຈ່າຍໃນດ້ານການຂາຍແລະການຕະຫລາດ | 420 | 224 | 125 |
| ຄ່າໃຊ້ຈ່າຍໃນການວິໄຈແລະພັດນາ | 117 | 72 | 34 |
| ຄ່າໃຊ້ຈ່າຍໃນການຈັດການ | 75 | 42 | 25 |
| ຄ່າໃຊ້ຈ່າຍອື່ນໆ | 42 | 102 | 24 |
| **ລວມຄ່າໃຊ້ຈ່າຍໃນການດຳເນີນງານ** | **654** | **440** | **208** |

| | | | |
|---|---|---|---|
| **ລາຍໄດ້ຈາກການດຳເນີນງານ** | **298** | **49** | **(15)** |
| ລາຍໄດ້ອື່ນໆ | (39) | 35 | 15 |
| **ລາຍໄດ້ກ່ອນຫັກປະໂຫຍດຈາກພາສີ** | **259** | **84** | **4** |
| ປະໂຫຍດຈາກພາສີລາຍໄດ້ | (188) | (36) | (18) |
| **ລາຍໄດ້ສຸດທິ** | **71** | **48** | |

ທີ່ມາ: ຄະນະກຳມະການກຳກັບເບິ່ງແລດລາດຫລັກຊັບສະຫລັດ ໆ (Security Exchange Commission)

## 4. ຈຸດເດັ່ນໃນການປະກອບທຸລະກິດ

ຈຸດເດັ່ນໃນການປະກອບທຸລະກິດພານິດຍ໌ອີເລັກໂທນິກສ໌ຂອງ Yahoo! ມີດັ່ງຕໍ່ໄປນີ້

1. ການເປັນຜູ້ບຸກເບີກ (First mover) ການກ້າວເຂົ້າມາດຳເນີນທຸລະກິດພານິດຍ໌ອີນ້ອຍຊໍນິກສ໌ໃນອັນດັບແລກ ໆຂອງ Yahoo! ເມື່ອປີ 1995 ເຮັດໃຫ້ Yahoo! ມີຊື່ສຽງແລະເປັນທີ່ນິຍົມຢ່າງຫລາຍໃນກຸ່ມຂອງຜູ້ໃຊ້ອິນເທີລ໌ເນັດ

2. ການມີໄດເລັກທໍລີ່ທີ່ມີຂະໜາດໃຫຍ່ທີ່ສຸດ ໃນປະຈຸບັນ Yahoo! ເປັນເວັບໄຊຕ໌ທີ່ມີໄດເລັກທໍລີ່ຂະໜາດໃຫຍ່ທີ່ສຸດແຫ່ງສຸດໜຶ່ງຂອງ-ໂລກ ຊຶ່ງເຮັດໃຫ້ຜູ້ໃຊ້ສາມາດສືບຄົ້ນຂໍ້ມູນແລະເວັບໄຊຕ໌ຕ່າງ ໆທີ່ຕ້ອງການໄດ້ຫລາຍຍິ່ງຂຶ້ນ

3. ການຮ່ວມກັບ Google ການເປັນພັນທະມິດກັບເວັບໄຊຕ໌ Google ຊຶ່ງເປັນເວັບໄຊຕ໌ທີ່ໄດ້ຮັບການຍອມຮັບຈາກກຸ່ມຜູ້ໃຊ້ອິນເທີລ໌-ເນັດວ່າເປັນ ເຄື່ອງສືບຄົ້ນ (Search Engine) ທີ່ດີທີ່ສຸດແຫ່ງໜຶ່ງໃນປະຈຸບັນ ຊຶ່ງເຮັດໃຫ້ Yahoo! ສາມາດເພີ່ມຄວາມ-ສາມາດໃນການໃຫ້ບໍລິການສືບຄົ້ນ ເວັບໄຊຕ໌ໄດ້ຢ່າງຫລາຍ

## 5. ປັດໄຈໃນຄວາມສຳເລັດ

ການປະກອບທຸລະກິດເວັບທ່າ ເຊັ່ນ Yahoo! ຈະປະສົບຄວາມສຳເລັດໄດ້ກໍຕໍ່ເມື່ອ

1. ຈຳນວນຜູ້ໃຊ້ອິນເຕີລ໌ເນັດມີຈຳນວນຫລາຍພໍ ການປະກອບທຸລະກິດຂອງ Yahoo! ເປັນການໃຫ້ບໍລິການແຫລ່ງຂໍ້ມູນແຫ່ງໜຶ່ງຂອງຜູ້-ໃຊ້ ແລະບໍລິສັດ ມີລາຍໄດ້ຫລັກມາຈາກການໃຫ້ບໍລິການໂຄສະນາອອນໄລນ໌ແກ່ບໍລິສັດຕ່າງ ໆ ດັ່ງນັ້ນ ຈຳນວນຜູ້ໃຊ້ອິນເຕີລ໌ເນັດຈະ-ເປັນປັດໄຈສຳຄັນໃນການ ຕັດສິນໃຈໃຊ້ບໍລິການໂຄສະນາອອນໄລນ໌ຂອງ Yahoo!

2. ຄວາມສາມາດທາງເທັກໂນໂລຍີທີ່ຈະອຳນວຍຄວາມສະດວກໃຫ້ກັບຜູ້ໃຊ້ບໍລິການໄດ້ຫລາຍຂຶ້ນ ທັງໃນດ້ານຄວາມໄວແລະຮູບແບບ-ຂອງບໍລິການທີ່ ຫລາກຫລາຍ ເຊັ່ນ ການມີເຄື່ອງມືສືບຄົ້ນທີ່ມີປະສິດທິພາບ ມີຄວາມວ່ອງໄວໃນການສະແດງຜົນລັບທ໌ແລະງ່າຍຕໍ່-ການໃຊ້ (User Friendly) ເປັນຕົ້ນ ຊຶ່ງ Yahoo! ຈຳເປັນຈະຕ້ອງພັດທະນາໃຫ້ເໜືອຄູ່ແຂ່ງຢູ່ສະເໝີ

3. ຄຸນຄ່າຂອງຕາ Yahoo! ຊຶ່ງເປັນປັດໄຈສຳຄັນທີ່ເຮັດໃຫ້ປະສົບຄວາມສຳເລັດ ບໍລິສັດຈຳເປັນຕ້ອງປົກປ້ອງ (Maintain) ແລະຍົກ-ລະດັບ (Enhance) ຄຸນຄ່າຂອງຕາຢູ່ສະເໝີ ໂດຍຕ້ອງພະຍາຍາມໃຫ້ຕົ້ນທຶນໃນສ່ວນນີ້ຕ່ຳທີ່ສຸດ

## 6. ທຸລະກິດອື່ນ ໆ ທີ່ມີໂມເດວຄ້າຍກັນ

「ທຸລະກິດອື່ນ ໆທີ່ມີໂມເດນໃກ້ຄຽງກັບ Yahoo! ໄດ້ແກ່

1. ເວັບທ່າທີ່ເປັນເຄື່ອງສືບຄົ້ນ (Search Engine Site) ເຊັ່ນ Google (www. google. com) ຫລື HotBot (www. hotbot. com) ຊຶ່ງໃຊ້ໂປແກມ ຫລືທີ່ຮຽກວ່າ Robot ຊ່ວຍຄົ້ນຫາເອກະສານແລະຈັດເຮັດດັດສະນີໃນການສືບຄົ້ນ

ເວັບທ່າເຫລົ່ານີ້ມີຂໍ້ດີທີ່ສາມາດສືບຄົ້ນຂໍ້ມູນໄດ້ ຢ່າງກວ້າງຂວ້າງຫລາຍ ແຕ່ຈະມີຂໍ້ເສຍທີ່ໄດ້ຂໍ້ມູນບໍ່ກົງກັບຄວາມຕ້ອງການ ຫລືໄດ້-ຫລາຍຈົນເກີນໄປ

2. ເວັບທ່າທີ່ເປັນໄດເລັກທໍລີ່ (Directory Site) ເຊັ່ນ Lycos (www. lycos. com) ຊຶ່ງໃຊ້ຄົນຈັດເຮັດໄດເລັກທໍລີ່ ເວັບທ່າ-ເຫລົ່ານີ້ມີຂໍ້ດີທີ່ສາມາດ ຄົ້ນຫາຂໍ້ມູນໄດ້ກົງກັບຄວາມຕ້ອງການຫລາຍກວ່າ ແຕ່ກໍມີຂໍ້ເສຍທີ່ຂອບເຂດການຄົ້ນຫາຄ່ອນຂ້າງແຄບກວ່າ-ແລະຕ້ອງໃຊ້ແຮງງານໃນການຈັດເຮັດຫລາຍ ເວັບທ່າທີ່ເປັນໄດເລັກທໍລີ່ຍັງສາມາດແຍກຕາມລັກສະນະສະເພາະຂອງການໃຫ້ບໍລິການ ດັ່ງຕໍ່ໄປນີ້

    1. ເວັບທ່າແບບແນວລາບ (Horizontal) ຊຶ່ງເປັນໄດເລັກທໍລີ່ທີ່ນວົບລວບຂໍ້ມູນທຸກສິ່ງທຸກຢ່າງສຳລັບທຸກ ໆຄົນ ແລະ ມີກຸ່ມເປົ້າໝາຍຄືຜູ້ໃຊ້ອິນເທີລ໌ເນັດທັງໝົດ ເຊັ່ນ Lycos

    2. ເວັບທ່າແບບແນວຕັ້ງຫລືສະເພາະກຸ່ມ (Vertical) ຊຶ່ງເປັນໄດເລັກທໍລີ່ແບບເຈາະກຸ່ມເປົ້າໝາຍ ເຊັ່ນ Cnet (ຄອມພິວເຕີ www. cnet. com) iVillage (ຜູ້ຍິງ www. ivillage. com) MP3 (ເພງ www. mp3. com)

ໃນປະຈຸບັນ Yahoo! ໄດ້ຕົກລົງຮ່ວມເປັນພັນທະມິດກັບ Google ເຮັດໃຫ້ສາມາດໃຫ້ບໍລິການໄດ້ທັງໃນຮູບແບບທີ່ເປັນໄດເລັກທໍລີ່ແລະ ເສີລ໌ຊເອັນຈິ້ນ ຊຶ່ງຊ່ວຍເພີ່ມປະສິດທິພາບຂອງການສືບຄົ້ນເວັບໄຊຕ໌ໄດ້ຢ່າງຫລາຍ ເນື່ອງຈາກລວມເອົາຂໍ້ດີຂອງທັງສອງບໍລິການເຂົ້ານຳກັນ

## 7. ໂອກາດທາງທຸລະກິດຂອງຜູ້ປະກອບການລາວ